ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

---

ກະຊວງປ້ອງກັນຄວາມສະຫງົບ

ເລກທີ..891..../ປກສ

ນະຄອນຫຼວງວຽງຈັນ,ວັນທີ:.19/9/07

"Smoke Free Ministry of Social Security"

# ຄຳສັ່ງ

## ຂອງລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ

**ເຖິງ:** ບັນດາຫົວໜ້າກົມໃຫ່ຍ, ກົມ, ກອງບັນຊາການ, ຫົວໜ້າກອງບັນຊາການ ປກສ ແຂວງ, ກອງບັນຊາການ ປກສ ນະຄອນຫຼວງ ໃນທົ່ວປະເທດ.

**ເລື່ອງ:** ການສ້າງເຂດປອດຄວັນຢາສູບໃນທົ່ວກຳລັງ ປກສ.

- ອີງໃສ່ນະໂຍບາຍວ່າດ້ວຍການຄວບຄຸມຢາສູບຢູ່ ສປປ ລາວ 2001 ລົງວັນທີ: 27 ມີນາ 2007

- ອີງໃສ່ກົດໝາຍວ່າດ້ວຍການອານາໄມກັນພະຍາດ ແລະ ສົ່ງເສີມສຸກຂະພາບ ສະບັບເລກທີ: 01/ສພຊ, ລົງວັນທີ: 10 ເມສາ 2001.

ເພື່ອໃຫ້ສຸຂະພາບຂອງພະນັກງານແຂງແຮງ ບໍ່ສ່ຽງຕໍ່ການເປັນພະຍາດທີ່ເກີດຈາກການສູບຢາ ແລະ ໄດ້ຮັບຄວັນຢາສູບຈາກຜູ້ອື່ນເຊິ່ງເປັນພະຍາດທີ່ເປັນອັນຕະລາຍເຖິງແກ່ຊີວິດກ່ອນໄວອັນຄວນ, ເພື່ອເປັນແບບຢ່າງທີ່ດີແລະປົກປັກຮັກສາຊິ່ງແວດລ້ອມ, ເພື່ອປະຫຍັດລາຍຈ່າຍທີ່ບໍ່ຈຳເປັນ.

### ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບອອກຄຳສັ່ງດັ່ງນີ້:

1./ ໃຫ້ບັນດາກົມໃຫ່ຍ, ກົມ, ກອງບັນຊາການ, ກອງບັນຊາການບັນດາແຂວງ, ນະຄອນຫຼວງ, ກອງບັນຊາການ ປກສ ບັນດາເມືອງ, ໂຮງຮຽນ ປກສ, ໂຮງໝໍ ປກສ ໃນທົ່ວປະເທດ ສ້າງເຂດປອດຄວັນຢາສູບ 100% ຂອງກຳລັງ ປກສ.

2./ ສ້າງບໍລິເວນດັ່ງຕໍ່ໄປນີ້ໃຫ້ເປັນເຂດປອດຄວັນຢາສູບເຊັ່ນ: ສະຖານທີ່ຫ້ອງການ, ຫ້ອງຮັບແຂກ, ຫ້ອງປະຊຸມ, ພະນັກງານທີ່ກຳລັງປະຕິບັດໜ້າທີ່ແລະມີການປະສານງານທີ່ສຳຄັນກັບແຂກຕ່າງໆ, ຢູ່ບັນດາກົມກອງອ້ອມຂ້າງກະຊວງ ກອງບັນຊາການ ປກສ ບັນດາແຂວງ, ນະຄອນຫຼວງ, ກອງບັນຊາການ ປກສ ບັນດາ ເມືອງ, ໂຮງຮຽນ ປກສ, ໂຮງໝໍ ປກສ, ໃນຂອບ

ເຂດທົ່ວປະເທດ; ພ້ອມດຽວກັນນັ້ນກໍ່ໃຫ້ຈັດເຂດອະນຸຍາດໃຫ້ສູບຢາຢູ່ນອກຫ້ອງການຫຼືອາຄານ ໂດຍຕິດປ້າຍປະກາດ " **ເຂດສູບຢາ** " ແລະປະກອບບ່ອນເຂ່ຍຂີ້ກອກຢາ ມອດກົດກອກຢາໃຫ້ພຽງພໍ, ມີການລະບາຍອາກາດຢ່າງເໝາະສົມ.

3./ ໃຫ້ຕິດກາໝາຍ " **ຫ້າມສູບຢາ** " ຫຼືຄໍາເຕືອນຕ່າງໆກ່ຽວກັບຜົນຮ້າຍຂອງການສູບຢາໃສ່ສະຖານທີ່ໆກ່າວມາໃນຂໍ້ 2.

4./ ເອົາໃຈໃສ່ສະກັດກັ້ນບໍ່ໃຫ້ມີການຂາຍຢາສູບໃນຮ້ານຄ້າຫຼືຕາມຫ້ອງການສະຖານທີ່ເຮັດວຽກຂອງກໍາລັງ ປກສ ເດັດຂາດ.

5./ ການຈັດຕັ້ງປະຕິບັດຫຼືການຝ່າຝືນປະກາດກ່ຽວກັບການຫ້າມສູບຢານີ້ໃຫ້ຖືວ່າແມ່ນນຶ່ງໃນມາດຕະຖານ ແລະ ຄຸນສົມບັດຂອງພະນັກງານ ( ຖ້າພະນັກງານທ່ານໃດຫາກຈັດຕັ້ງປະຕິບັດໄດ້ດີຢ່າງຖືກຕ້ອງ ແລະ ເປັນແບບຢ່າງທີ່ດີໃຫ້ແກ່ໝູ່ເພື່ອນໃນການເລີກສູບຢາຈະໄດ້ຮັບການຍ້ອງຍໍສັນລະເສີນຕາມຄວາມເໝາະສົມ, ແຕ່ຖ້າຫາກພະນັກງານທ່ານໃດທີ່ຍັງບໍ່ທັນປະຕິບັດໄດ້ດີຈະຖືກຕໍານິ, ສິ່ງຂ່າວ, ຕັກເຕືອນພ້ອມທັງຈະຖືກພິຈາລະນາການຈັດແບ່ງປະເພດຕ່າງໆຂອງພະນັກງານ ).

6./ ໃຫ້ແຕ່ລະກົມກອງທ້ອງຖິ່ນຂອງກໍາລັງປ້ອງກັນຄວາມສະຫງົບ ພ້ອມກັນຈັດຕັ້ງເຜີຍແຜ່ໃຫ້ທົ່ວເຖິງ ແລະ ປະຕິບັດຢ່າງມີປະສິດທິຜົນ ໃນຂອບເຂດຄວາມຮັບຜິດຊອບຂອງຕົນ. ຢູ່ຂັ້ນກົມໃຫ່ຍ, ກົມ, ກອງບັນຊາການ, ກອງບັນຊາການ ປກສ ບັນດາແຂວງ-ນະຄອນຫຼວງຕ້ອງຂຶ້ນແຜນສູ້ຊົນເພື່ອຫຼຸດຜ່ອນຈໍານວນຖັນແຖວພະນັກງານ-ນັກຮົບ ທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນໃຫ້ມີການຫຼຸດຜ່ອນຢາສູບລົງເປັນແຕ່ລະບາດກ້າວ ແລະ ໃຫ້ລາຍງານແຜນການສູ້ຊົນກໍ່ຄືຜົນການປະຕິບັດຕົວຈິງ ທີ່ໄດ້ຮັບໃຫ້ ຫ້ອງວ່າການກະຊວງ ປກສ ໄດ້ຮັບຊາບທຸກໆ 3 ເດືອນ.

ດັ່ງນັ້ນ; ຈຶ່ງໄດ້ອອກຄໍາສັ່ງໃຫ້ທຸກພາກສ່ວນທີ່ຂຶ້ນກັບ ກະຊວງປ້ອງກັນຄວາມສະຫງົບ ພ້ອມກັນຈັດຕັ້ງປະຕິບັດຄໍາສັ່ງສະບັບນີ້ຢ່າງເຂັ້ມງວດ.

**ລັດຖະມົນຕີວ່າການກະຊວງປ້ອງກັນຄວາມສະຫງົບ**

ທອງບັນ ແສງອາພອນ